# ສິດທິ ແລະ ການປົກປ້ອງຕໍ່ກັບ ໃບບິນທາງການແພດທີ່ບໍ່ໄດ້ຄາດຫວັງໄວ້ກ່ອນ

## (Surprise Medical Bills)

ເມື່ອທ່ານຮັບການດູແລສຸກເສີນ ຫຼື ຮັບການຮັກສາຈາກຜູ້ໃຫ້ບໍລິການທີ່ຢູ່ນອກເຄືອຂ່າຍທີ່ ສະຖານປິ່ນປົວໃນເຄືອຂ່າຍ, ລວມທັງໂຮງໝໍ ຫຼື ສູນຜ່າຕັດຜູ້ປ່ວຍນອກ, ທ່ານຈະໄດ້ຮັບການປົກປ້ອງຈາກການຮຽກເກັບເງິນຕາມຍອດຄົງເຫຼືອ. ໃນກໍລະນີເຫຼົ່ານີ້, ທ່ານບໍ່ຄວນຖືກຮຽກເກັບເງິນຫລາຍກວ່າ ການຊໍາລະຮ່ວມ, ປະກັນໄພຮ່ວມ ແລະ/ຫຼື ວົງເງິນຈ່າຍກ່ອນ ຂອງແຜນສຸຂະພາບຂອງທ່ານ.

## "ການຮຽກເກັບເງິນຕາມຍອດຄົງເຫຼືອ" (ບາງຄັ້ງຮຽກວ່າ "ໃບບິນທີ່ບໍ່ໄດ້ຄາດຫວັງໄວ້ກ່ອນ" ແມ່ນຫຍັງ?

ໃນເວລາທ່ານໄປພົບທ່ານໝໍ ຫຼື ຜູ້ໃຫ້ບໍລິການດູແລສຸຂະພາບອື່ນໆ, ທ່ານອາດມີໜີ້ຄົງຄ້າງສໍາລັບ จໍານວນເງິນທີ່ທ່ານຈ່າຍເອງ, ຄືກັບ ການຊໍາລະຮ່ວມ, ປະກັນໄພຮ່ວມ, ຫຼື ວົງເງິນຈ່າຍກ່ອນ. ທ່ານອາດມີຄ່າໃຊ້ຈ່າຍເພີ່ມເຕີມ ຫຼື ຈໍາເປັນຕ້ອງຈ່າຍບິນທັງໝົດຫາກທ່ານໄປພົບທ່ານໝໍ ຫຼື ສະຖານທີ່ດູແລສຸຂະພາບທີ່ບໍ່ຢູ່ໃນ ເຄືອຂ່າຍຂອງແຜນສຸຂະພາບຂອງທ່ານ.

“ນອກເຄືອຂ່າຍ” ໝາຍເຖິງ ຜູ້ໃຫ້ບໍລິການ ແລະ ສະຖານປິ່ນປົວທີ່ບໍ່ໄດ້ເຊັນສັນຍາກັບ ແຜນສຸຂະພາບຂອງທ່ານໃນການສະໜອງການບໍລິການ. ຜູ້ໃຫ້ບໍລິການນອກເຄືອຂ່າຍອາດໄດ້ຮັບອະນຸຍາດໃນການຮຽກເກັບບິນນໍາທ່ານສໍາລັບສ່ວນຕ່າງລະຫວ່າງ ຈໍານວນທີ່ແຜນສຸຂະພາບຂອງທ່ານຈ່າຍ ແລະ ຈໍານວນເຕັມທີ່ເກັບສໍາລັບຄ່າການບໍລິການ. ນີ້ຮຽກວ່າ “**ການຮຽກເກັບເງິນຕາມຍອດຄົງເຫຼືອ**.” ຈໍານວນນີ້ອາດຈະຫຼາຍກວ່າ ຄ່າໃຊ້ຈ່າຍໃນເຄືອຂ່າຍສໍາລັບ ການບໍລິການອັນດຽວກັນ ແລະ ບໍ່ອາດຄິດໄລ່ໄປຍັງວົງເງິນຈ່າຍກ່ອນຂອງແຜນສຸຂະພາບຂອງທ່ານ ຫຼື ຂີດຈໍາກັດຈໍານວນເງິນທີ່ທ່ານຈ່າຍເອງປະຈໍາປີ.

“ໃບບິນທີ່ບໍ່ໄດ້ຄາດຫວັງໄວ້ກ່ອນ” ແມ່ນການຮຽກເກັບເງິນຕາມຍອດຄົງເຫຼືອທີ່ບໍ່ໄດ້ຄາດການໄວ້. ສິ່ງນີ້ເກີດຂຶ້ນໄດ້ຫາກທ່ານບໍ່ສາມາດຄວບຄຸມຜູ້ທີ່ເຂົ້າກ່ຽວພັນໃນການດູແລຮັກສາທ່ານ—ເຊັ່ນວ່າ ໃນເວລາທ່ານເກີດເຫດສຸກເສີນ ຫຼື ເມື່ອທ່ານກໍານົດເວລາເພື່ອໄປພົບໝໍທີ່ສະຖານພະຍາບານໃນເຄືອຂ່າຍ ແຕ່ວ່າໄດ້ຮັບການຮັກສາໂດຍ ຜູ້ໃຫ້ບໍລິການນອກເຄືອຂ່າຍໂດຍທີ່ບໍ່ໄດ້ຄາດການໄວ້ກ່ອນ. ໃບບິນທາງການແພດທີ່ບໍ່ໄດ້ຄາດຫວັງໄວ້ກ່ອນຈະມີຈໍານວນເງິນຫລາຍພັນໂດລາຂຶ້ນກັບຂັ້ນຕອນ ຫຼື ການບໍລິການ.

## ທ່ານໄດ້ຮັບການປົກປ້ອງຈາກ ການຮຽກເກັບເງິນຕາມຍອດຄົງເຫຼືອສໍາລັບ:

**ການບໍລິການສຸກເສີນ**

ຖ້າທ່ານມີບັນຫາທາງການແພດສຸກເສີນ ແລະ ຮັບການບໍລິການສຸກເສີນຈາກ ຜູ້ໃຫ້ບໍລິການ ຫຼື ສະຖານປິ່ນປົວນອກເຄືອຂ່າຍ, ລວມທັງ ໂຮງໝໍ ຫຼື ສູນຜ່າຕັດຄົນປ່ວຍເຂດນອກ, ສ່ວນໃຫ່ຍພວກເຂົາຈະຮຽກເກັບເງິນນໍາທ່ານແມ່ນ ຈໍານວນເງິນແບ່ງກັນຊໍາລະໃນເຄືອຂ່າຍຂອງແຜນສຸຂະພາບຂອງທ່ານ (ເຊັ່ນ: ການຊໍາລະຮ່ວມ, ປະກັນໄພຮ່ວມ ແລະ ວົງເງິນຈ່າຍກ່ອນ). ທ່ານຈະ**ບໍ່ສາມາດ**ຖືກຮຽກເກັບຕາມຍອດຄົງເຫຼືອ ສໍາລັບການບໍລິການສຸກເສີນເຫຼົ່ານີ້. ເຊິ່ງລວມເຖິງການບໍລິການທ່ານອາດໄດ້ຮັບພາຍຫຼັງສະພາບສຸຂະພາບຂອງທ່ານຄົງທີ່ແລ້ວ, ເວັ້ນແຕ່ວ່າ ທ່ານໄດ້ໃຫ້ການຍິນຍອມເປັນລາຍລັກອັກສອນ ແລະ ຍົກເລີກການປົກປ້ອງຂອງທ່ານໃນການບໍ່ຖືກຮຽກເກັບຍອດຄົງເຫຼືອສໍາລັບ ການບໍລິການທີ່ກ່ຽວຂ້ອງກັບການດູແລພາຍຫຼັງສຸຂະພາບຄົງທີ່ແລ້ວເຫຼົ່ານີ້.

*ກະລຸນາເບິ່ງຂໍ້ມູນລຸ່ມນີ້ກ່ຽວກັບ ກົດໝາຍລັດ Florida.*

**ການບໍລິການໜຶ່ງໆໃນສະຖານປິ່ນປົວໃນເຄືອຂ່າຍ**

ເມື່ອທ່ານຮັບການບໍລິການຈາກສະຖານປິ່ນປົວຢູ່ນອກເຄືອຂ່າຍ, ລວມທັງໂຮງໝໍ ຫຼື ສູນຜ່າຕັດຜູ້ປ່ວຍນອກ, ຜູ້ໃຫ້ບໍລິການໜຶ່ງໆທີ່ນັ້ນອາດເປັນ ຜູ້ໃຫ້ບໍລິການນອກເຄືອຂ່າຍ. ໃນກໍລະນີເຫຼົ່ານີ້, ຜູ້ໃຫ້ບໍລິການເຫຼົ່ານັ້ນສ່ວນຫລາຍສາມາດຮຽກເກັບບິນນໍາທ່ານແມ່ນ ຈໍານວນເງິນແບ່ງກັນຊໍາລະໃນເຄືອຂ່າຍຂອງແຜນສຸຂະພາບຂອງທ່ານ. ສິ່ງນີ້ນໍາໃຊ້ກັບ ຢາປົວພະຍາດສຸກເສີນ, ຢາສະຫຼົບ, ພະຍາດວິທະຍາ, ລັງສີວິທະຍາ, ຫ້ອງວິເຄາະ, ການເກີດລູກ, ຜູ້ຊ່ວຍໝໍຜ່າຕັດ, ການບໍລິການຂອງແພດໃນໂຮງໝໍ ຫຼື ແພດດູແລຫ້ອງສຸກເສີນ. ຜູ້ໃຫ້ບໍລິການເຫຼົ່ານີ້**ບໍ່ສາມາດ**ຮຽກເກັບເງິນຕາມຍອດຄົງເຫຼືອນໍາທ່ານ ແລະ **ບໍ່**ອາດຮ້ອງຂໍໃຫ້ທ່ານຍົກເລີກ ການປົກປ້ອງການບໍ່ຖືກຮຽກເກັບເງິນຕາມຍອດຄົງເຫຼືອ.

ຖ້າທ່ານຮັບການບໍລິການປະເພດອື່ນທີ່ສະຖານປິ່ນປົວໃນເຄືອຂ່າຍເຫລົ່ານີ້, ຜູ້ໃຫ້ບໍລິການນອກເຄືອຂ່າຍ **ບໍ່ສາມາດ** ຮຽກເກັບເງິນຍອດຄົງເຫຼືອນໍາທ່ານ, ເວັ້ນແຕ່ວ່າ ທ່ານໄດ້ໃຫ້ການຍິນຍອມເປັນລາຍລັກອັກສອນ ແລະ ຍົກເລີກການປົກປ້ອງຂອງທ່ານ.

## ທ່ານຈະບໍ່ຖືກຮ້ອງຂໍໃຫ້ຍົກເລີກການປົກປ້ອງຈາກການເກັບເງິນຕາມຍອດຄົງເຫຼືອຢ່າງເດັດຂາດ. ນອກນັ້ນທ່ານຈະບໍ່ຖືກຮ້ອງຂໍໃຫ້ຮັບການດູແລນອກເຄືອຂ່າຍນຳດ້ວຍ. ທ່ານສາມາດເລືອກຜູ້ໃຫ້ບໍລິການ ຫຼື ສະຖານປິ່ນປົວໜຶ່ງໃນເຄືອຂ່າຍຂອງແຜນສຸຂະພາບທ່ານ.

*ກະລຸນາເບິ່ງຂໍ້ມູນລຸ່ມນີ້ກ່ຽວກັບ ກົດໝາຍລັດ Florida.*

**<u>ເມື່ອການຮຽກເກັບເງິນຕາມຍອດຄົງເຫຼືອບໍ່ໄດ້ຮັບອະນຸຍາດ, ທ່ານຈະມີການປົກປ້ອງເຫຼົ່ານີ້:</u>**

- ທ່ານພຽງຮັບຜິດຊອບການຊຳລະສ່ວນແບ່ງຄ່າໃຊ້ຈ່າຍຂອງທ່ານ (ເຊັ່ນວ່າ ການຊຳລະຮ່ວມ, ປະກັນໄພຮ່ວມ ແລະ ວົງເງິນຈ່າຍກ່ອນທີ່ທ່ານຈະຈ່າຍ ຫາກຜູ້ໃຫ້ບໍລິການ ຫຼື ສະຖານປິ່ນປົວນອນຢູ່ໃນເຄືອຂ່າຍ). ແຜນສຸຂະພາບຂອງທ່ານຈະຊຳລະຄ່າໃຊ້ຈ່າຍເພີ່ມເຕີມໃຫ້ ຜູ້ໃຫ້ບໍລິການນອກເຄືອຂ່າຍ ແລະ ສະຖານປິ່ນປົວໂດຍກົງ.

- ໂດຍທົ່ວໄປແລ້ວ, ແຜນສຸຂະພາບຂອງທ່ານຕ້ອງ:
  - ຄຸ້ມຄອງສຳລັບການບໍລິການສຸກເສີນໂດຍບໍ່ຮ້ອງຂໍທ່ານເພື່ອຮັບການອະນຸມັດສຳລັບການບໍລິການລ່ວງໜ້າ (ເຊິ່ງຮູ້ຈັກກັນຄື "ການຂໍອະນຸມັດລ່ວງໜ້າ").
  - ຄຸ້ມຄອງການບໍລິການສຸກເສີນທີ່ສະໜອງໂດຍ ຜູ້ໃຫ້ບໍລິການນອກເຄືອຂ່າຍ.
  - ຈຳນວນທີ່ທ່ານຕິດໜີ້ຜູ້ໃຫ້ບໍລິການ ຫຼື ສະຖານປິ່ນປົວ (ການແບ່ງປັນຄ່າໃຊ້ຈ່າຍ) ໂດຍອີງໃສ່ຈຳນວນທີ່ຈະຊຳລະ ຜູ້ໃຫ້ບໍລິການໃນເຄືອຂ່າຍ ຫຼື ສະຖານປິ່ນປົວ ແລະ ສະແດງຈຳນວນນັ້ນໃນການອະທິບາຍກ່ຽວກັບຜົນປະໂຫຍດຂອງທ່ານ.
  - ຄິດໄລ່ຈຳນວນເງິນໃດໜຶ່ງທີ່ທ່ານຊຳລະສຳລັບການບໍລິການສຸກເສີນ ຫຼື ການບໍລິການນອກເຄືອຂ່າຍໄປຍັງ ວົງເງິນຈ່າຍກ່ອນໃນເຄືອຂອງທ່ານ ແລະ ຂີດຈຳກັດສ່ວນທີ່ທ່ານຈະຊຳລະເອງ.

## ກົດໝາຍລັດ Florida

ໂດຍທົ່ວໄປກົດລັດ Florida Law ມີການປົກປ້ອງການຮຽກເກັບເງິນຕາມຍອດຄົງເຫຼືອ ເຊິ່ງຄ້າຍຄືກັນກັບການປົກປ້ອງທີ່ຢູ່ພາຍໃຕ້ ກົດໝາຍວ່າດ້ວຍການປົກປ້ອງຄົນປ່ວຍຈາກການເກັບບິນທີ່ບໍ່ໄດ້ຄາດຫວັງໄວ້ກ່ອນ (No Surprises Act) (ຕາມທີ່ໄດ້ອະທິບາຍໃນແຈ້ງການສະບັບນີ້), ຍົກເວັ້ນ ຫາກທ່ານມີແຜນສຸຂະພາບປະເພດໜຶ່ງໆ (ຕົວຢ່າງ: ແຜນສຸຂະພາບທີ່ສະໜອງໂດຍນາຍຈ້າງ ເຊັ່ນວ່າ ຜູ້ໃຫ້ບໍລິການທີ່ຕ້ອງການ ("PPO") ຫຼື ແຜນຜູ້ໃຫ້ບໍລິການພິເສດ ("EPO")), ຜູ້ໃຫ້ບໍລິການຂອງທ່ານບໍ່ສາມາດຮຽກເກັບຄ່າທ່ານຫລາຍກວ່າ ຈຳນວນເງິນແບ່ງກັນຊຳລະໃນເຄືອຂ່າຍຂອງແຜນສຸຂະພາບຂອງທ່ານ ເຖິງວ່າທ່ານໃຫ້ການຍິນຍອມກໍ່ຕາມ. ຖ້າທ່ານມີແຜນໜຶ່ງຂອງບັນດາແຜນເຫຼົ່ານີ້, ລັດ Florida ຍັງຂະຫຍາຍການປົກປ້ອງ ການຮຽກເກັບເງິນຕາມຍອດຄົງເຫຼືອໄປຍັງການບໍລິການສຸກເສີນ ແລະ ການບໍລິການທີ່ບໍ່ສຸກເສີນທີ່ຮັບການຄຸ້ມຄອງທີ່ໄດ້ຮັບໃນ ສູນການດູແລສຸກເສີນ. ຖ້າທ່ານບໍ່ແນ່ໃຈວ່າທ່ານມີແຜນໃນບັນດາແຜນເຫຼົ່ານີ້ຫຼືບໍ່, ກະລຸນາກວດຄືນບັດປະກັນໄພຂອງທ່ານ, ໂທບໍລິສັດປະກັນໄພຂອງທ່ານ ຫຼື ຕິດຕໍ່ ຝ່າຍບໍລິການການເງິນຂອງຜູ້ປ່ວຍ ຕາມເບີ 1-800-952-5462.

**ຫາກທ່ານຄິດວ່າຕົນເອງຖືກຮຽກເກັບເງິນຢ່າງຜິດພາດ**, ຕິດຕໍ່ HHS No Surprises Helpdesk ທີ່ເບີ 1-800-985-3059, ເຊິ່ງເປັນໜ່ວຍງານຮັບຜິດຊອບການບັງຄັບໃຊ້ ກົດໝາຍວ່າດ້ວຍການປົກປ້ອງການຮຽກເກັບເງິນທີ່ບໍ່ໄດ້ຄາດຫວັງໄວ້ກ່ອນ ຫຼື ການຮຽກເກັບເງິນຕາມຍອດຄົງເຫຼືອແຫ່ງລັດຖະບານກາງ. ເຂົ້າໄປທີ່ www.cms.gov/nosurprises/consumers ສຳລັບຂໍ້ມູນເພີ່ມເຕີມກ່ຽວກັບສິດທິຂອງທ່ານພາຍໃຕ້ ກົດໝາຍລັດຖະບານກາງ.

ນອກຈາກນັ້ນລັດ Florida ຍັງມີຂະບວນການການແກ້ໄຂການໂຕ້ແຍ້ງອິດສະລະເພື່ອແກ້ໄຂບັນຫາທີ່ກ່ຽວພັນກັບການຊົດເຊີຍຄ່າເສຍຫາຍ, ລວມທັງການໂຕ້ແຍ້ງກັບຜູ້ໃຫ້ບໍລິການ ຫຼື ແຜນປະກັນໄພຂອງທ່ານກ່ຽວກັບ ໃບຮັບເງິນຂອງການຮຽກເກັບເງິນຕາມຍອດຄົງເຫຼືອທີ່ບໍ່ສົມຄວນ. ຖ້າທ່ານໄດ້ຮັບໃບບິນຮຽກເກັບເງິນຕາມຍອດຄົງເຫຼືອທີ່ບໍ່ສົມຄວນຈາກຜູ້ໃຫ້ບໍລິການຂອງທ່ານ, ທ່ານສາມາດຍື່ນຄຳຮ້ອງທຸກກັບ ກະຊວງກະສິກຳ ແລະ ການບໍລິການຜູ້ຊົມໃຊ້ຂອງລັດ Florida (Florida Department of Agriculture and Consumer Services) ໂດຍການເຂົ້າໄປທີ່ https://www.fdacs.gov/#. ຖ້າທ່ານໄດ້ຮັບໃບບິນຮຽກເກັບເງິນຕາມຍອດຄົງເຫຼືອທີ່ບໍ່ສົມຄວນຈາກບໍລິສັດປະກັນໄພຂອງທ່ານ, ທ່ານສາມາດຍື່ນຄຳຮ້ອງທຸກກັບ ສຳນັກງານການຄວບຄຸມປະກັນໄພ, ພະແນກການບໍລິການດ້ານການເງິນແຫ່ງ Florida (Florida Office of Insurance Regulation, Department of Financial Services) ທີ່ https://myfloridacfo.com/division/consumers/.